ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 416 /ນຍ

ນະຄອນຫລວງວຽງຈັນ, ວັນທີ 23.09.2010

# ດຳລັດ
## ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ
## ວ່າດ້ວຍການຮັບຮອງ, ການຢັ້ງຢືນ ແລະ ການຍົກເວັ້ນສະເພາະ ທີ່ຕິດພັນກັບໂຄງການໄຟຟ້າພະລັງງານຄວາມຮ້ອນຫົງສາ

- ອີງຕາມ:
  - ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
  - ກົດໝາຍວ່າດ້ວຍໄຟຟ້າ ສະບັບເລກທີ 03/ສພຊ, ລົງວັນທີ 8 ທັນວາ 2008 ("**ກົດໝາຍໄຟຟ້າ**");
  - ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003 ("**ກົດໝາຍທີ່ດິນ**");
  - ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 04/ສພຊ, ລົງວັນທີ 8 ທັນວາ 2008 ("**ກົດໝາຍແຮ່ທາດ**");
  - ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ສະບັບເລກທີ 05-96/ສພຊ, ລົງວັນທີ 11 ຕຸລາ 1996 ("**ກົດໝາຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**");
  - ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 04/ສພຊ, ລົງວັນທີ 19 ພຶດສະພາ 2005 ("**ກົດໝາຍສ່ວຍສາອາກອນ**");
  - ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ສະບັບເລກທີ 362/ນຍ, ລົງວັນທີ 19 ຕຸລາ 2007 ("**ດຳລັດຈັດຕັ້ງປະຕິບັດກົດໝາຍພາສີ**");
  - ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼືສຳປະທານ ສະບັບເລກທີ 135/ນຍ, ລົງວັນທີ 25 ພຶດສະພາ 2009 ("**ດຳລັດວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ**");

- ສັນຍາສຳປະທານໂຮງງານໄຟຟ້າປາກບໍ່ແຮ່ຫົງສາ (**"ສັນຍາສຳປະທານໄຟຟ້າ"**) ສະບັບລົງວັນທີ 30 ພະຈິກ 2009 ຊຶ່ງເຮັດຂຶ້ນລະຫວ່າງ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (**"ລັດຖະບານລາວ"**) ຕາງໜ້າໂດຍກະຊວງແຜນການ ແລະ ການລົງທຶນ ແລະ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ (**"ບໍລິສັດຜະລິດໄຟຟ້າ"**);
- ສັນຍາສຳປະທານຂຸດຄົ້ນບໍ່ແຮ່ຖ່ານຫີນ ແລະ ຫີນປູນ ຫົງສາ (**"ສັນຍາສຳປະທານຂຸດຄົ້ນບໍ່ແຮ່"**) ສະບັບລົງວັນທີ 30 ພະຈິກ 2009 ຊຶ່ງເຮັດຂຶ້ນລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາງໜ້າໂດຍກະຊວງແຜນການ ແລະ ການລົງທຶນ ແລະ ບໍລິສັດ ພູໄຟມາຍນິງ ຈຳກັດ (**"ບໍລິສັດຂຸດຄົ້ນບໍ່ແຮ່"**);
- ສັນຍາສາມຝ່າຍ ສຳຫຼັບການມອບໂອນ ສັນຍາສຳປະທານຂຸດຄົ້ນບໍ່ແຮ່ຖ່ານຫີນ ແລະ ຫີນປູນຫົງສາ (**"ສັນຍາສາມຝ່າຍ"**) ສະບັບລົງວັນທີ 30 ພະຈິກ 2009 ຊຶ່ງເຮັດຂຶ້ນລະຫວ່າງ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາງໜ້າໂດຍກະຊວງແຜນການ ແລະ ການລົງທຶນ, ບໍລິສັດໄຟຟ້າ ແລະ ບໍລິສັດຂຸດຄົ້ນບໍ່ແຮ່;
- ຂໍ້ຜູກພັນຂອງລັດຖະບານລາວ ຊຶ່ງເຮັດຂຶ້ນລະຫວ່າງ ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ (EGAT) ແລະ ລັດຖະບານລາວ (**"ຂໍ້ຜູກພັນຂອງລັດຖະບານ"**) ສະບັບລົງວັນທີ 25 ສິງຫາ 2010;
- ມະຕິຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການຮັບຮອງເອົາການຕົກລົງໃຫ້ສຳປະທານແກ່ ບໍລິສັດໄຟຟ້າຫົງສາ ຈຳກັດ ແລະ ບໍລິສັດ ພູໄຟມາຍນິງ ຈຳກັດ ໂດຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 62/ຄປຈ, ລົງວັນທີ 2 ກໍລະກົດ 2010;
- ພັນທະຂອງລັດຖະບານລາວ ຕາມທີ່ໄດ້ຖືກກຳນົດໄວ້ໃນມາດຕາ 2.7 ຂອງສັນຍາສຳປະທານ ຊຶ່ງມີການອະທິບາຍຢູ່ໃນ ພາກທີ I ຂອງເອກະສານທ້າຍ H ຂອງສັນຍາ ສຳປະທານ ວ່າດ້ວຍການອອກດຳລັດສະບັບນີ້ ເພື່ອເປັນການຮັບຮອງຂອງ ສປປ ລາວ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:**

**ມາດຕາ 1. ລັດຖະບານແຫ່ງ ສປປ ລາວ ຕົກລົງຮັບຮອງ:**

1.1 ສິດຂອງບໍລິສັດຜະລິດໄຟຟ້າ ແລະ ບໍລິສັດຂຸດຄົ້ນບໍ່ແຮ່ ໃນການໃຊ້ຊັບສິນຄົງທີ່ ເປັນກຳມະສິດຂອງຕົນ ຊຶ່ງຕັ້ງຢູ່ເທິງທີ່ດິນທີ່ໄດ້ເຊົ່ານຳລັດຖະບານ ເພື່ອໃຊ້ເປັນຫຼັກຊັບຄ້ຳປະກັນ ໂດຍສອດຄ່ອງກັບ ມາດຕາ 66 (2) ຂອງ ກົດໝາຍທີ່ດິນ;

1.2 ສິດຂອງບໍລິສັດຜະລິດໄຟຟ້າ ແລະ ບໍລິສັດຂຸດຄົ້ນບໍ່ແຮ່ ໃນການເອົາສິດນຳໃຊ້ທີ່ດິນ ທີ່ໄດ້ມີການຕົກລົງໃຫ້ແກ່ ບໍລິສັດຂຸດຄົ້ນບໍ່ແຮ່ ພາຍໃຕ້ສັນຍາສຳປະທານຂຸດຄົ້ນບໍ່ແຮ່ ໄປໃຫ້ແກ່ບໍລິສັດຜະລິດໄຟຟ້າ ເຊົ່າຕໍ່ ພາຍໃຕ້ສັນຍາສາມຝ່າຍ ໂດຍສອດຄ່ອງກັບ ມາດຕາ 66 (3)

ຂອງກົດໝາຍທີ່ດິນ;

1.3 ການມອບໂອນ ແລະ ການມອບໝາຍໃບທະບຽນການຂຸດຄົ້ນບໍ່ແຮ່ຕ່າງໆຈາກ ບໍລິສັດຂຸດຄົ້ນບໍ່ແຮ່ ໄປໃຫ້ແກ່ບໍລິສັດຜະລິດໄຟຟ້າ ພາຍໃຕ້ສັນຍາສາມຝ່າຍ ໂດຍສອດຄ່ອງກັບ ມາດຕາ 74 (8) ຂອງ ກົດໝາຍແຮ່ທາດ;

1.4 ການຜ່ອນຜັນດ້ານພາສີ-ອາກອນ ໃຫ້ແກ່ບໍລິສັດໄຟຟ້າ, ບໍລິສັດຂຸດຄົ້ນບໍ່ແຮ່, ຜູ້ຮັບເໝົາ, ຜູ້ຮັບເໝົາຊ່ວງຕໍ່ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ຂໍ້ 3.1 ຂອງສັນຍາສຳປະທານ ໂດຍສອດຄ່ອງກັບກົດໝາຍສ່ວຍສາອາກອນ ແລະ ດຳລັດຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ;

1.5 ທຸກການມອບໝາຍ ຫຼື ການມອບໂອນສິດ ແລະ/ຫຼື ພັນທະ ໂດຍບໍລິສັດໄຟຟ້າ ແລະ ບໍລິສັດຂຸດຄົ້ນບໍ່ແຮ່ ໃຫ້ແກ່ບັນດາຜູ້ໃຫ້ກູ້ຢືມ ແລະ EGAT ຕາມມາດຕາ 16.2 ແລະ 16.3 ຂອງສັນຍາສຳປະທານ ໂດຍສອດຄ່ອງກັບບັນດາກົດໝາຍທີ່ກ່ຽວຂ້ອງຂອງ ສປປລາວ.

**ມາດຕາ 2. ລັດຖະບານແຫ່ງ ສປປ ລາວ ຢືນຢັນວ່າ:**

2.1 ການຕົກລົງກ່ຽວກັບລາຄາໄຟຟ້າ ຕາມທີ່ລະບຸໄວ້ໃນສັນຍາຊື້ຂາຍໄຟຟ້າກັບ EGAT ແລະ ສັນຍາຊື້ຂາຍໄຟຟ້າກັບລັດວິສາຫະກິດໄຟຟ້າລາວ ແມ່ນສອດຄ່ອງກັບແຜນພັດທະນາໄຟຟ້າ ແລະ ເປັນໄປຕາມ ມາດຕາ 47 ຂອງ ກົດໝາຍໄຟຟ້າ;

2.2 ລັດຖະບານແຫ່ງ ສປປ ລາວ ໄດ້ມອບສິດໃຫ້ ກະຊວງແຜນການ ແລະ ການລົງທຶນ ແລະ/ຫຼື ອົງການຄຸ້ມຄອງທີ່ດິນແຫ່ງຊາດ, ແລ້ວແຕ່ກໍລະນີ, ເພື່ອລົງລາຍເຊັນໃນ ສັນຍາສາມຝ່າຍ, ຂໍ້ຜູກພັນຂອງລັດຖະບານ, ສັນຍາເຊົ່າທີ່ດິນ, ສັນຍາໂດຍກົງ, ເອກະສານຢັ້ງຢືນການເຫັນດີ ແລະການຮັບຮູ້ຕ່າງໆ ທີ່ເປັນສິ່ງຄ້ຳປະກັນເຖິງສິດ ພາຍໃຕ້ສັນຍາສຳປະທານໄຟຟ້າ, ສັນຍາສຳປະທານຂຸດຄົ້ນບໍ່ແຮ່, ສັນຍາສາມຝ່າຍ ແລະ ສັນຍາເຊົ່າທີ່ດິນ ໂດຍສອດຄ່ອງກັບ ເອກະສານການເງິນ ແລະ ເອກະສານຫລັກປະກັນຕ່າງໆ ແລະ ຢືນຢັນວ່າການລົງນາມໃນເອກະສານດັ່ງກ່າວ ໂດຍກະຊວງແຜນການ ແລະ ການລົງທຶນ ແລະ/ຫຼື ອົງການຄຸ້ມຄອງທີ່ດິນແຫ່ງຊາດ, ແລ້ວແຕ່ກໍລະນີ, ແມ່ນເຮັດໃນນາມລັດຖະບານແຫ່ງ ສປປ ລາວ.

**ມາດຕາ 3. ລັດຖະບານແຫ່ງ ສປປ ລາວ ຍົກເວັ້ນການປະຕິບັດ:**

3.1 ມາດຕາ 31 ຂອງດຳລັດວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ, ກ່ຽວກັບໄລຍະເວລາສູງສຸດຂອງສັນຍາເຊົ່າທີ່ດິນ;

3.2 ມາດຕາ 37 ຂອງດຳລັດວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ, ກ່ຽວກັບຄວາມຈຳເປັນທີ່ຕ້ອງມີການເພີ່ມຂຶ້ນຂອງຄ່າເຊົ່າທີ່ດິນ ໃນໄລຍະເວລາຂອງສັນຍາເຊົ່າທີ່ດິນ;

3.3 ມາດຕາ 43 ຂອງດຳລັດວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ, ກ່ຽວກັບການຄິດໄລ່ຄ່າຊົດເຊີຍໃຫ້ກັບປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍໃຫ້ປະຕິບັດຕາມ ພັນທະຂອງບໍລິສັດຜະລິດໄຟຟ້າ ແລະ ບໍລິສັດຂຸດຄົ້ນບໍ່ແຮ່ ໃນການຈ່າຍຄ່າຊົດເຊີຍຕາມທີ່ລະບຸໄວ້ ໃນ

ເອກະສານຊ້ອນທ້າຍ I ຂອງສັນຍາສຳປະທານໄຟຟ້າ ແລະ ເອກະສານຊ້ອນທ້າຍ Q ຂອງສັນຍາສຳປະທານບໍ່ແຮ່.

3.4 ມາດຕາ 12, 13 ແລະ14 ຂອງດຳລັດຈັດຕັ້ງປະຕິບັດກົດໝາຍພາສີ, ທີ່ກ່ຽວພັນກັບຂໍ້ກຳນົດໃນການວາງເງິນຄ້ຳປະກັນໃນກໍລະນີທີ່ມີຄວາມຈຳເປັນຕ້ອງນຳໃຊ້ເຄື່ອງຈັກໜັກ, ພາຫະນະ ແລະ ອາໄຫຼ່ຂອງເຄື່ອງຈັກດັ່ງກ່າວໃນ ສປປ ລາວ ເປັນໄລຍະເວລາຫຼາຍກວ່າ 2 ປີ.

**ມາດຕາ 4. ດຳລັດ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບນີ້:**

4.1 ອອກໃຫ້ ໃນນາມລັດຖະບານ ຂອງ ສປປ ລາວ ແລະ ຈະຖືກຄຸ້ມຄອງ ແລະ ຕີຄວາມໝາຍດ້ວຍກົດໝາຍຂອງ ສປປ ລາວ;

4.2 ມີຜົນສັກສິດຕໍ່ບໍລິສັດຜະລິດໄຟຟ້າ, ບໍລິສັດຂຸດຄົ້ນບໍ່ແຮ່ ແລະ ບັນດາຜູ້ຮັບເໝົາ, ຜູ້ຮັບເໝົາຊ່ວງຕໍ່, ຜູ້ໃຫ້ກູ້, EGAT ແລະ ແຕ່ລະຝ່າຍຊຶ່ງໄດ້ຮັບອະນຸຍາດ ໃຫ້ເປັນຜູ້ມີພັນທະຮ່ວມກັບບໍລິສັດ ໂດຍສອດຄ່ອງກັບສັນຍາສຳປະທານໄຟຟ້າ ແລະ ສັນຍາສຳປະທານບໍ່ແຮ່ ຫຼື ຜູ້ສືບທອດໃດນຶ່ງ ຂອງບໍລິສັດ ພາຍໃຕ້ສັນຍາສຳປະທານໄຟຟ້າ ແລະ ສັນຍາສຳປະທານບໍ່ແຮ່ ໂດຍອີງຕາມເງື່ອນໄຂຂອງສັນຍາທີ່ມີຜົນນຳໃຊ້ ລະຫວ່າງ ບໍລິສັດ ແລະ ຝ່າຍທີ່ກ່ຽວຂ້ອງດັ່ງກ່າວ ໃນສ່ວນທີ່ກ່ຽວຂ້ອງນັ້ນໆ;

4.3 ຖ້າຫາກບໍ່ໄດ້ກຳນົດເປັນຢ່າງອື່ນຢູ່ໃນທີ່ນີ້, ຄຳສັບຕ່າງໆ ທີ່ໄດ້ມີການກຳນົດນິຍາມແລ້ວ ຢູ່ໃນສັນຍາສຳປະທານ ຈະຕ້ອງມີຄວາມໝາຍອັນດຽວກັນ ເມື່ອເວລາຄຳສັບດັ່ງກ່າວ ຫາກໄດ້ຖືກນຳໃຊ້ເຂົ້າໃນດຳລັດສະບັບນີ້.

**ມາດຕາ 5. ຜົນບັງຄັບໃຊ້ ແລະ ຜົນສັກສິດ:**

5.1 ບັນດາທ່ານລັດຖະມົນຕີກະຊວງ, ປະທານອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຕ່າງໆ ແລະ ບໍລິສັດ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດ ຕາມດຳລັດສະບັບນີ້ຢ່າງເຂັ້ມງວດ;

5.2 ດຳລັດສະບັບນີ້ ມີຜົນບັງຄັບໃຊ້ຢ່າງເຕັມສ່ວນ ແລະ ມີຜົນສັກສິດ ນັບຈາກວັນທີ ທີ່ໄດ້ລະບຸໄວ້ຂ້າງເທິງນີ້ ຈົນກ່ວາຈະໝົດອາຍຸສັນຍາສຳປະທານ ຫຼື ຈົນກ່ວາຈະມີການຍົກເລີກສັນຍາສຳປະທານກ່ອນກຳນົດ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ